ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້ ເລກທີ...2741.../ກປ

ນະຄອນຫຼວງວຽງຈັນ, ວັນທີ...22...ພຶດສະພາ 2017

# ຄຳສັ່ງ

## ກ່ຽວກັບການຄຸ້ມຄອງ ການລ້ຽງໝູ, ການສະໜອງຊີ້ນ ແລະ ຜະລິດຕະພັນໝູ ຢູ່ ສປປ ລາວ

ເຖິງ:
- ບັນດາທ່ານກຳມະການ ໃນຄະນະປະສານງານຂັ້ນສູນກາງ ເພື່ອປະຕິບັດ ໂຄງການ ສົ່ງເສີມຜະລິດເປັນສິນຄ້າ ແລະ ຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ແຫ່ງຊາດ ຕາມຂໍ້ຕົກລົງ ສະບັບເລກທີ 04/ນຍ, ລົງວັນທີ 05 ມັງກອນ 2017.
- ຫົວໜ້າ ແລະ ຄະນະກອງເລຂາຄະນະປະສານງານ ເພື່ອປະຕິບັດໂຄງການ ສົ່ງເສີມຜະລິດເປັນສິນຄ້າ ແລະ ຄ້ຳປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ຂັ້ນສູນກາງ ແລະ ແຂວງ, ນະຄອນຫຼວງວຽງຈັນ.
- ທ່ານ ຫົວໜ້າກົມລ້ຽງສັດ ແລະການປະມົງ ໃນນາມຜູ້ປະຈຳການ ກອງເລຂາ ຢູ່ສູນກາງ;
- ທ່ານ ຫົວໜ້າພະແນກກະສິກຳ ແລະປ່າໄມ້ ປະຈຳແຂວງ ແລະນະຄອນຫຼວງວຽງຈັນໃນນາມຜູ້ປະຈຳການ ກອງເລຂາ ປະຈຳການຢູ່ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດແລະການສັດຕະວະແພດ ສະບັບປັບປຸງເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມດຳລັດຂອງນາຍົກລັດຖະມົນຕີ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017 ວ່າດ້ວຍການຈັດຕັ້ງແລະການເຄື່ອນໄຫວຂອງກະຊວງກະສິກຳແລະປ່າໄມ້;
- ອີງຕາມ ແຈ້ງການຂອງຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເລກທີ 158/ຫສນຍ.ກສສ, ລົງວັນທີ 31 ມັງກອນ 2017.

ພັກ ແລະ ລັດຖະບານ ຍາມໃດ ກໍໃຫ້ບູລິມະສິດຕໍ່ການຜະລິດດ້ານກະສິກຳ ເປັນຕົ້ນແມ່ນ ການຜະລິດດ້ານສະບຽງອາຫານ ຮັບໃຊ້ພາຍໃນໃຫ້ຄ້ຳປະກັນຄວາມໝັ້ນຄົງ ທາງດ້ານສະບຽງອາຫານ ແລະ ສົ່ງເສີມ ການຜະລິດສະບຽງເປັນສິນຄ້າ ເພື່ອສົ່ງອອກ ຕ່າງປະເທດ ບົນພື້ນຖານພັດທະນາ ໄປຕາມທິດສີຂຽວ ເຮັດກະສິກຳສະອາດ ແລະ ທັນສະໄໝ ນຳໃຊ້ທ່າແຮງບົ່ມຊ້ອນພາຍໃນ ສົມທົບຄວາມກ້າວໜ້າ ດ້ານວິທະຍາສາດ ເຕັກນິກ ແລະ ເຕັກໂນໂລຊີ ແລະ ທີ່ຍືນຍົງ, ເປັນມິດຕໍ່ສິ່ງແວດລ້ອມ. ມາຮອດປັດຈຸບັນ, ພວກເຮົາສາມາດຮັບປະກັນໂດຍພື້ນຖານ ກ່ຽວກັບການຕອບສະໜອງສະບຽງອາຫານ ເຂົ້າ, ພືດສະບຽງ, ສັດ ແລະ ປາ. ໃນນີ້ ເວົ້າສະເພາະ ການສົ່ງເສີມ ການລ້ຽງໝູ, ພວກເຮົາສາມາດພັດທະນາ ຢ່າງແຂງແຮງສົມຄວນ ໂດຍສະເພາະ ໃນໄລຍະ 10 ປີຜ່ານມາ ຊຶ່ງມາຮອດປະຈຸບັນນີ້ ຄຽງຄູ່ກັບ ການປັບປຸງການລ້ຽງໝູແບບທຳມະຊາດ ຢູ່ຊົນນະບົດ ໄປສູ່

ຜະລິດຕະພາບສູງກວ່າເກົ່າ, ພວກເຮົາ ໄດ້ພັດທະນາລະບົບການລ້ຽງໝູເປັນຟາມທັນສະໄໝ ຢູ່ຕົວເມືອງໃຫຍ່ ຢ່າງກ້າວກະໂດດສົມຄວນ ຊຶ່ງປະຈຸບັນນີ້ ໄດ້ມີອັດຕາສ່ວນ ເຖິງ 30% ຂອງການຜະລິດທັງໝົດໃນ ທົ່ວປະເທດ, ກວມເຖິງປະມານ 24.000 ແມ່ ໃນເກືອບ 700 ຟາມໃນລະດັບທົ່ວປະເທດ ໂດຍສາມາດສະໜອງລູກໝູແນວພັນດີ ລ້ຽງເປັນໝູຊີ້ນປະມານ 400.000 ໂຕຕໍ່ປີ ແລະ ສະໜອງຊີ້ນເຖິງ 27.000 ໂຕນຕໍ່ປີ, ສາມາດສະຕອບສະໜອງຄວາມຕ້ອງການພາຍໃນ ໂດຍສະເພາະຕົວເມືອງໃຫຍ່ ເປັນຕົ້ນແມ່ນ ນະຄອນຫຼວງວຽງຈັນ, ແຂວງວຽງຈັນ, ຫຼວງພະບາງ, ຄໍາມ່ວນ, ສະຫວັນນະເຂດ ແລະ ແຂວງຈໍາປາສັກ.

ແຕ່ພ້ອມດຽວກັນນັ້ນ ຍ້ອນການຜະລິດພາຍໃນ ຍັງບໍ່ທັນແຂງແຮງ ແລະ ໝັ້ນຄົງ, ຍັງບໍ່ທັນຜະລິດເປັນລະບົບຕ່ອງໂສ້ ທີ່ຮັບປະກັນຕົ້ນທຶນຕໍ່າ, ຍ້ອນການຄຸ້ມຄອງ ກ່ຽວກັບການດຸ່ນດ່ຽງ ຄວາມຕ້ອງການ ແລະ ການສະໜອງ ກໍຄືການຮັບປະກັນການປະຕິບັດ ນິຕິກໍາ ແລະ ສະບຽບການ ການລ້ຽງສັດ ແລະ ສັດຕະວະແພດຂອງພາກສ່ວນຂະແໜງການລັດ ກ່ຽວຂ້ອງ ນັບທັງຢູ່ສູນກາງ ແລະ ທ້ອງຖິ່ນ ບໍ່ທັນເຂັ້ມງວດ, ເຂັ້ມແຂງ ແລະ ມີປະສິດທິຜົນເທົ່າທີ່ຄວນ ແລະ ຍ້ອນສະພາບການເຊື່ອມໂຍງດ້ານເສດຖະກິດ ຢູ່ໃນຂົງເຂດ ແລະ ຢູ່ໃນໂລກມີການເປີດກວ້າງ ຢ່າງສູງຊຶ່ງນໍາມາທັງ ກະລະໂອກາດ ແລະ ສິ່ງທ້າທາຍຫຼາຍຢ່າງ, ການຜະລິດ ແລະ ສະໜອງໝູ ຢູ່ພາຍໃນ ປະເທດ ຍັງບໍ່ສາມາດຮັບປະກັນດ້ານປະລິມານ ແລະ ໂດຍສະເພາະດ້ານຄຸນນະພາບ. ນອກຈາກນັ້ນ, ລະບົບຂອງກຸ່ມຜະລິດໝູ, ກຸ່ມປຸງແຕ່ງ ແລະ ຈໍາໜ່າຍຜະລິດຕະພັນໝູ ກໍຄື ສະມາຄົມການລ້ຽງໝູ ແລະ ຄ້າໝູ ແລະ ຜະລິດຕະພັນໝູ ຍັງບໍ່ໄດ້ເຄື່ອນໄຫວເທົ່າທີ່ຄວນ ແລະ ກໍບໍ່ໄດ້ຮັບການສົ່ງເສີມ, ຊ່ວຍເຫຼືອ ແລະ ສະໜັບສະໜູນ ຢ່າງເປັນລະບົບຈາກພາກລັດ. ຍ້ອນເຫດນີ້ ຍັງມີຄວາມຕ້ອງການນໍາເຂົ້າ ກ່ຽວກັບພໍ່ແມ່ພັນໝູ ມາດຕະ ຖານສາກົນ, ການນໍາເຂົ້າລູກໝູແນວພັນດີ, ການນໍາເຂົ້າອາຫານໝູ ແລະ ຢາທາດບໍາລຸງອັນຈໍາເປັນ ແລະ ການນໍາເຂົ້າ ຜະລິດຕະພັນຈາກໝູ ຊຶ່ງຖ້າການນໍາເຂົ້າ ແມ່ນປະຕິບັດຕາມກົດໝາຍ ແລະ ລະບຽບການວາງໄວ້ ຈະບໍ່ມີການກະທົບຕໍ່ການຜະລິດ ຢູ່ພາຍໃນ. ແຕ່ພ້ອມດຽວກັນ ຍ້ອນການຕິດຕາມ ກວດກາ ຈາກພາກລັດ ແລະ ກຸ່ມຜະລິດ ກໍຄື ສະມາຄົມ ຍັງບໍ່ທັນເຂັ້ມແຂງ ຈຶ່ງເກີດມີການລັກລອບນໍາເຂົ້າ ໝູເປັນ ແລະ ຜະລິດຕະພັນໝູ ຢ່າງບໍ່ຖືກຕ້ອງ ແລະ ຢ່າງຫຼວງຫຼາຍ ຈາກພາຍນອກ ເປັນຕົ້ນແມ່ນ ຜ່ານດ່ານທາງການ ໂດຍບໍ່ໄດ້ຮັບການອະນຸຍາດ ແລະ ຜ່ານດ່ານທ້ອງຖິ່ນ ແລະ ດ່ານປະເພນີ. ໜັກໄປກວ່ານີ້ ແມ່ນມີປະກົດການນໍາຊີ້ນໝູ ແລະ ຜະລິດຕະພາບໝູ ຄຸນນະພາບຕໍ່າ ແລະລາຄາຖືກ ມາຈາກປະເທດໄກທີ່ບໍ່ບໍລິໂພກໝູ ເຮັດໃຫ້ເກີດມີ ພະຍາດແຜ່ລາມຢູ່ພາຍໃນ.

ດັ່ງນັ້ນ, ເພື່ອແກ້ໄຂບັນຫາດັ່ງກ່າວ ຢ່າງຂາດຕົວໃນໄລຍະຍາວນານ ແລະ ໃຫ້ສະຫງົບປົກກະຕິ, ສາມາດຍູ້ຂະບວນການລ້ຽງໝູພາຍໃນຂອງລາວເຮົາ ໃຫ້ຂະຫຍາຍຕົວຢ່າງແຂງແຮງ ແລະ ມີຄວາມສາມາດແຂ່ງໃນລະດັບສູງ, ຮັບປະກັນຄວາມຍືນຍົງ ພ້ອມດຽວກັນກໍເພື່ອປ້ອງກັນ ແລະ ສະກັດກັ້ນການແຜ່ລະບາດຂອງພະຍາດສັດຈາກພາຍນອກເຂົ້າມາ ສປປ ລາວ ນັ້ນ,

**ລັດຖະມົນຕີ ກະຊວງກະສິກໍາ ແລະ ປ່າໄມ້ ອອກຄໍາສັ່ງ:**

1. ໃຫ້ກອງເລຂາຂອງຄະນະປະສານງານຂັ້ນສູນກາງ ເພື່ອປະຕິບັດໂຄງການ ສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄໍ້າປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ຂັ້ນສູນກາງ ຍົກສູງຄວາມຮັບຜິດຊອບຂອງຕົນ ໃນການກໍານົດ, ຕິກລົງ ແລະ ຊຸກຍູ້ການປະຕິບັດແຜນດຸ່ນດ່ຽງຄວາມຕ້ອງການ ໃນການສະໜອງໝູ ແລະ ຜະລິດຕະພັນໝູ ຢ່າງເປັນລະບົບຕໍ່ເນື່ອງ ແລະລົງເລິກແຍກ ເປັນແຕ່ລະແຂວງ ໂດຍເນັ້ນໜັກໃສ່ແຂວງ ແລະ ຕົວເມືອງໃຫຍ່. ພ້ອມນີ້ ຕ້ອງໄດ້ຄົ້ນຄວ້າກ່ຽວກັບຕົ້ນທຶນການຜະລິດ, ຊອກຫາສາເຫດ

ແລະ ສະເໜີມາດຕະການ ຕໍ່ຂັ້ນເທິງ ເພື່ອແກ້ໄຂບັນດາຂອດ ການຜະລິດ ແລະ ການປຸງແຕ່ງຈຳໜ່າຍ ທີ່ເຮັດໃຫ້ ລາຄາຕົ້ນທຶນສູງ, ໝາຍວ່າ ມີການວາງຍຸດທະສາດ, ແຜນການ ແລະ ໂຄງການລະອຽດ ເພື່ອແກ້ໄຂສະພາບການຜະລິດໝູໃຫ້ ມີຕົ້ນທຶນ ທີ່ສາມາດແຂ່ງຂັນໄດ້ ກັບປະເທດອ້ອມຂ້າງ.

2. ໃຫ້ກອງເລຂາຂອງໂຄງການ ສົ່ງເສີມ ການຜະລິດເປັນສິນຄ້າ ແລະ ໂຄງການຄໍ້າປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ຂັ້ນສູນກາງ ສົມທົບກັບອົງການປົກຄອງແຂວງ, ນະຄອນຫຼວງວຽງຈັນ, ເມືອງ ແລະ ຄະນະກອງເລຂາຂັ້ນທ້ອງຖິ່ນ ເພື່ອຊຸກຍູ້ ແລະ ຕິດຕາມ ກ່ຽວກັບການປະຕິບັດແຜນດຸ່ນດ່ຽງ ຄວາມຕ້ອງການ ແລະ ການສະໜອງໝູ ແລະ ຜະລິດຕະພັນໝູ ແລະ ວາງກົນໄກຮ່ວມກັນ ເພື່ອຕິດຕາມ ດັດສົມກ່ຽວກັບການນຳເຂົ້າ ພໍ່ແມ່ພັນໝູ, ລູກໝູ, ອາຫານໝູ, ຢາປ້ອງກັນພະຍາດໝູ, ຜະລິດຕະພັນໝູ ແລະ ອື່ນໆ ຢ່າງເປັນລະບົບ ປົກກະຕິ. ພ້ອມນີ້ ກໍ່ເພີ່ມທະວີ ການເອົາໃຈໃສ່ ລົງກວດກາ ຕິດຕາມ ຊ່ວຍເຫຼືອ ແລະ ມີມາດຕະການ ຕໍ່ບັນດາຟາມລ້ຽງໝູ ຂອງພາຍໃນ ແລະ ຕ່າງປະເທດ, ຕໍ່ບັນດາໂຮງງານອາຫານສັດ, ໂຮງງານຂ້າສັດປຸງແຕ່ງຊີ້ນ, ຕະຫຼາດທີ່ປະຕິບັດ ແລະບໍ່ປະຕິບັດລະບຽບກົດໝາຍວາງໄວ້. ພ້ອມນີ້ ກໍມີແຜນ ແລະ ໂຄງການຕົວຈິງ ສະເໜີຕໍ່ຂັ້ນເທິງ ເພື່ອແກ້ໄຂບັນຫາຄົງຄ້າງ ທີ່ເປັນການກີດຂວາງປະສິດທິພາບ ແລະ ປະສິດທິຜົນຂອງການລ້ຽງໝູຢູ່ພາຍໃນ.

3. ໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ຢູ່ພາຍໃນກະຊວງ ກະສິກຳ ແລະ ປ່າໄມ້ ແລະ ໃນກະຊວງ ອຸດສະຫະກຳ ແລະ ການຄ້າ ກອງເລຂາ ຂອງໂຄງການສົ່ງເສີມການຜະ ລິດເປັນສິນຄ້າ ແລະ ໂຄງການຄໍ້າປະກັນຄວາມໝັ້ນຄົງດ້ານສະບຽງອາຫານ ເຮັດໜ້າທີ່ຈຸດສຸມສະເພາະໜ້າດັ່ງນີ້:
- ສົມທົບກັບພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງວຽງຈັນ, ພະແນກການ ຂອງຂະແໜງການກ່ຽວຂ້ອງ ແລະ ກຸ່ມຜະລິດ, ສະມາຄົມລ້ຽງສັດ ຫຼື ລ້ຽງໝູປະຈຳທ້ອງຖິ່ນ ສ້າງແຜນດຸ່ນດ່ຽງ ຄວາມຕ້ອງການໃນການຜະລິດໝູພາຍໃນ ຢ່າງຮອບດ້ານ ເພື່ອເປັນບ່ອນອີງ ກຳນົດ ແຜນນຳເຂົ້າພໍ່ແມ່ພັນໝູ, ໝູນ້ອຍ, ອາຫານໝູ ແລະ ຢາ ແລະ ສິ່ງທີ່ຕ້ອງການນຳເຂົ້າອື່ນໆ ກ່ຽວກັບການລ້ຽງໝູ ໃຫ້ຖືກຕ້ອງຕາມແຜນວາງໄວ້ ຢ່າງເຂັ້ມງວດ. ໃຫ້ມີເຄື່ອງມື ແລະ ກົນໄກ ກ່ຽວກັບການຕິດຕາມ ແລະ ແລກປ່ຽນຂໍ້ມູນ ກ່ຽວກັບຄວາມຕ້ອງການ ແລະ ແຜນດຸ່ນດ່ຽງການຜະລິດໝູ ແລະ ຄວາມຕ້ອງການນຳເຂົ້າຕາມສະເໜີມານັ້ນ ຢ່າງເປັນລະບົບ ເພື່ອສາມາດເຮັດໃຫ້ ການຜະລິດພາຍໃນມີການຂະຫຍາຍຕົວ ຢ່າງແຂງແຮງ ແລະເປັນລະບົບ.
- ສົມທົບກັບພະແນກ ກະສິກຳ ແລະ ປ່າໄມ້ກໍຄືພະແນກການ ຂອງຂະແໜງການກ່ຽວຂ້ອງຢູ່ທ້ອງຖິ່ນ ກຳນົດແຜນ, ສ້າງເປັນໂຄງການ ແລະ ດຳເນີນການປັບປຸງ ຍົກລະດັບບັນດາ ກຸ່ມຜູ້ລ້ຽງໝູ ທີ່ມີແລ້ວ ໃຫ້ເຂັ້ມແຂງ ຂຶ້ນກວ່າເກົ່າ ພ້ອມດຽວກັນນັ້ນ ສ້າງກົນໄກ ໃຫ້ມີການປະຊຸມ ພົບປະແລກປ່ຽນ ແລະ ສະໜອງຂໍ້ມູນ ໃຫ້ເຊິ່ງກັນ ແລະ ກັນ ນຳພາກສ່ວນກຸ່ມຜູ້ລ້ຽງໝູ, ສະມາຄົມຜູ້ລ້ຽງໝູ ກໍຄື ກຸ່ມ ແລະ ສະມາຄົມຜູ້ປຸງແຕ່ງ ແລະ ຂາຍຜະລິດຕະພັນໝູ ແລະ ຫົວໜ່ວຍຜະລິດ ທຸລະກິດໝູຕ່າງໆ ທີ່ກ່ຽວຂ້ອງ ເພື່ອຊ່ວຍກັນເຮັດໜ້າທີ່ ຄຸ້ມຄອງການຜະລິດ, ການຂ້າ-ປຸງແຕ່ງ ແລະ ຂາຍໝູຊີ້ນ ຢ່າງເປັນລະບົບ ຕ່ອງໂສ້ແນໃສ່ເພີ່ມຜະລິດຕະພາບ ແລະ ຫຼຸດຕົ້ນທຶນ ແລະ ຮັບປະກັນ ໃຫ້ການຜະລິດ ພາຍໃນເຂັ້ມແຂງ ແລະ ສາມາດສະໜອງ ຄວາມຕ້ອງການພາຍໃນໄດ້ເປັນສ່ວນໃຫຍ່.

- ສົມທົບກັບ ພະແນກ ກະສິກຳ ແລະ ປ່າໄມ້ ແຂວງ, ນະຄອນຫຼວງ ກໍຄື ພະແນກການກ່ຽວຂ້ອງ ຊີ້ນຳ ອົງການຈັດຕັ້ງຂອງຕົນຢູ່ຂັ້ນເມືອງ, ຂັ້ນບ້ານ ເພື່ອຊຸກຍູ້ຕິດຕາມ ການກວດກາ ການນຳເຂົ້າ ແລະ ສົ່ງອອກສັດ ແລະ ຜະລິດພັນຈາກສັດ, ອາຫານສັດ ແລະ ຢາ ແລະ ວັດຖຸອຸປະກອນອື່ນໆ ທີ່ກ່ຽວຂ້ອງກັບການສົ່ງເສີມ ການລ້ຽງສັດ ຢູ່ບັນດາດ່ານສາກົນ, ດ່ານທ້ອງຖິ່ນ ແລະ ດ່ານປະເພນີ ຢ່າງເຂັ້ມງວດ ແລະ ເປັນລະບົບ. ໃຫ້ມີການລາຍງານ ຂຶ້ນມາຫາກອງເລຂາ ຢ່າງຕໍ່ເນື່ອງ ເພື່ອສາມາດຕິດຕາມໄດ້ຢ່າງໃກ້ຊິດ ແລະ ມີມາດຕະການດຳເນີນການຢ່າງທັນການ ໃນທຸກກໍລະນີ.
- ສົມທົບກັບພະແນກ ກະສິກຳ ແລະ ປ່າໄມ້ ແລະ ຊີ້ນຳໜ່ວຍງານລ້ຽງສັດ ສັດຕະວະແພດ ຢູ່ເມືອງ ແລະ ສັດຕະວະແພດອາສາສະໝັກຢູ່ບ້ານ ເພື່ອວາງລະບຽບການໃນການຄຸ້ມຄອງ ການນຳເຂົ້າ ແລະ ສົ່ງອອກສັດ ແລະ ຜະລິດຕະພັນຈາກສັດ, ວັດຖຸອຸປະກອນສົ່ງເສີມການລ້ຽງສັດ ແລະ ມີວິຊາການລົງຊ່ວຍເມືອງ ແລະ ບ້ານ ເພື່ອປະຕິບັດໜ້າທີ່ຂອງຕົນໃຫ້ໄດ້ຢ່າງມີປະສິດທິພາບ ແລະ ປະສິດທິຜົນ.

4. ໃຫ້ ພະແນກກະສິກຳ ແລະປ່າໄມ້ ປະຈຳແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳ ແລະ ເອົາໃຈໃສ່ ເຮັດໜ້າທີ່ດັ່ງນີ້:

- ສົມທົບກັບພະແນກອຸດສາຫະກຳ ແລະການຄ້າ, ພະແນກການເງິນ, ອົງການປົກຄອງເມືອງ ແລະ ບ້ານ, ຕິດຕາມ ກວດກາ ຢ່າງເຂັ້ມງວດ ແລະ ເປັນປົກກະຕິໃນການເຄື່ອນຍ້າຍນຳເຂົ້າ, ສົ່ງອອກ ແລະສົ່ງຜ່ານແດນຢູ່ດ່ານຕ່າງໆທີ່ຕັ້ງຢູ່ໃນທ້ອງຖິ່ນຂອງຕົນ. ໃນກໍລະນີພົບເຫັນການລະເມີດ ກໍໃຫ້ປະຕິບັດຕາມຂັ້ນຕອນທີ່ລະບຸໄວ້ໃນ ມາດຕາ 117, 118 ແລະ 119 ຂອງກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະ ແພດ ເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ຊີ້ນຳ ແລະ ຊ່ວຍເຫຼືອ ຂະແໜງລ້ຽງສັດ ແລະການປະມົງ ແລະໜ່ວຍງານດ່ານກວດກາສັດຕະວະແພດປະຈຳດ່ານຊາຍແດນທີ່ຂຶ້ນກັບຕົນ ເຮັດໜ້າທີ່ຕາມຄຳສັ່ງສະບັບນີ້, ເພີ່ມທະວີເອົາໃຈໃສ່ຕິດຕາມຂໍ້ມູນຂ່າວສານການລະບາດຂອງພະຍາດສັດ ຢູ່ປະເທດໃກ້ຄຽງຢ່າງໃກ້ຊິດ; ກວດກາການນຳເຂົ້າສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດທຸກຊະນິດ ທີ່ນຳເຂົ້າ, ຂົນສົ່ງຜ່ານ ສປປ ລາວ ນັບທັງຜະລິດຕະພັນສັດທີ່ຕິດຕາມຕົວຜູ້ໂດຍສານ ຫຼື ຜູ້ເດີນທາງເຂົ້າ ສປປ ລາວ. ຖ້າກວດພົບບໍ່ມີໃບຢັ້ງຢືນສຸຂະພາບສັດ ຫຼື ໃບຢັ້ງຢືນສຸຂານາໄມຜະລິດຕະພັນສັດ ທີ່ອອກໃຫ້ໂດຍອົງການຄຸ້ມຄອງສັດຕະວະ ແພດຂອງລັດປະເທດຕົ້ນທາງ ແມ່ນບໍ່ອະນຸຍາດໃຫ້ນຳເຂົ້າຢ່າງເດັດຂາດ, ທຸກການລະເມີດລະບຽບກົດໝາຍ ຕ້ອງປະຕິບັດມາດຕະການກ່າວເຕືອນ, ປັບ ໃໝ ຫຼື ດຳເນີນຄະດີທາງແພ່ງ, ອາຍາ ຕາມແຕ່ລະກໍລະນີເບົາ ຫຼືໜັກ ທີ່ໄດ້ກຳນົດໄວ້ໃນລະບຽບກົດ ໝາຍຢ່າງເຂັ້ມງວດ, ສ່ວນຂອງກາງທີ່ກວດຍຶດໄດ້ ໃຫ້ນຳໄປທຳລາຍຖິ້ມ ດ້ວຍການເຜົາ ຫຼື ຝັງ ຕາມເຕັກນິກວິຊາການ;
- ຊີ້ນຳ ແລະ ຊ່ວຍເຫຼືອ ຂະແໜງລ້ຽງສັດ ແລະການປະມົງແຂວງ, ນະຄອນຫຼວງວຽງຈັນ ເປັນເຈົ້າການສົມທົບກັບໜ່ວຍງານດ່ານກວດກາສັດຕະວະແພດປະຈຳດ່ານຊາຍແດນທີ່ຂຶ້ນກັບຕົນ ສືບຕໍ່ໂຄສະນາປະຊາສຳພັນ ໃຫ້ຜູ້ປະກອບການ ແລະ ທຸກພາກສ່ວນກ່ຽວຂ້ອງ ຮັບຮູ້ຢ່າງທົ່ວເຖິງ ກ່ຽວກັບລະບຽບການນຳເຂົ້າ-ສົ່ງອອກສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ, ໂດຍການສ້າງປຶ້ມຄູ່ມື, ແຜ່ນພັບ ຫຼື ປົດສະເຕີກ່ຽວກັບເອກະສານປະກອບການນຳເຂົ້າ, ສົ່ງອອກ, ຂົນສົ່ງຜ່ານສັດ ແລະ ຜະລິດຕະພັນສິນຄ້າກ່ຽວກັບສັດ ເພື່ອຕິດປະກາດໄວ້ໃນຈຸດທີ່ເປີດແປນ ຫຼື ບ່ອນທີ່ຜູ້ປະກອບການສາມາດເຫັນສະດວກ.

5. ມອບໃຫ້ຫ້ອງການກະຊວງ, ກົມແຜນການ ແລະ ການເງິນ, ກົມລ້ຽງສັດ ແລະ ການປະມົງ ແລະ ກົມກວດກາ ລົງຈັດຕັ້ງ ເຊື່ອມຊຶມ ເຜີຍແຜ່ ໂດຍສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ຈັດຕັ້ງປະຕິບັດຄຳສັ່ງສະບັບນີ້ ໃຫ້ໄດ້ຮັບຜົນດີ ແລະ ລາຍງານຢ່າງເປັນລະບົບປົກກະຕິ ໃຫ້ກອງເລຂາຂອງຄະນະປະສານງານຂັ້ນສູນກາງ ເພື່ອປະຕິບັດໂຄງການ ສົ່ງເສີມການຜະລິດເປັນສິນຄ້າ ແລະ ໂຄງການຄ້ຳປະກັນຄວາມໝັ້ນຄົງ ດ້ານສະບຽງອາຫານ ເພື່ອເປັນຂໍ້ມູນລາຍງານ ຕໍ່ລັດຖະບານ ຢ່າງປົກກະຕິ.

ລັດຖະມົນຕີ ກະຊວງກະສິກຳ ແລະປ່າໄມ້

ລຽນ ທິແກ້ວ

<u>ບ່ອນນຳສົ່ງ:</u>

1. ຫ້ອງວ່າການສູນກາງພັກ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
2. ຫ້ອງວ່າການ ຫສນຍ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
3. ກະຊວງອຸດສາຫະກຳ ແລະ ການຄ້າ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
4. ກະຊວງການເງິນ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
5. ບັນດາແຂວງ ແລະ ນະຄອນຫຼວງ ທົ່ວປະເທດ ບ່ອນລະ 01 ສະບັບ (ເພື່ອໃຊ້ຕາງລາຍງານ);
6. ປະທານສະພາອຸດສະຫະກຳການຄ້າ ແຫ່ງຊາດ 01 ສະບັບ;
7. ບັນດາທ່ານໃນຄະນະປະສານງານ 01 ສະບັບ;
8. ທ່ານ ຫົວໜ້າກອງເລຂາ ຄະນະປະສານງານ 01 ສະບັບ;
9. ບັນດາກົມ ແລະ ສະຖາບັນ ອ້ອມຂ້າງກະຊວງ 01 ສະບັບ;
10. ບັນດາຫົວໜ້າພະແນກ ກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫຼວງວຽງຈັນ ບ່ອນລະ 01 ສະບັບ;
11. ບັນດາດ່ານສາກົນ ແລະ ດ່ານທ້ອງຖິ່ນ ບ່ອນລະ 01 ສະບັບ.